ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0067 /ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2020.

# ແຈ້ງການ

ເຖິງ : ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

ເລື່ອງ : ແຈ້ງປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດຳລັດວ່າດ້ວຍ ການຄຸ້ມຄອງທຸລະກິດນ້ຳມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1645/ຫສນຍ.ກລຂ, ລົງວັນທີ 02 ຕຸລາ 2018.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 10,770 | 9,650 | 9,040 |
| 2 | ແຂວງຜົ້ງສາລີ | - | 10,410 | 9,800 |
| 3 | ແຂວງຫຼວງນ້ຳທາ | - | 10,010 | 9,400 |
| 4 | ແຂວງອຸດົມໄຊ | 11,250 | 10,130 | 9,520 |
| 5 | ແຂວງບໍ່ແກ້ວ | 10,870 | 9,750 | 9,140 |
| 6 | ແຂວງຫຼວງພະບາງ | 11,170 | 10,050 | 9,440 |
| 7 | ແຂວງໄຊຍະບູລີ | 11,020 | 9,900 | 9,290 |
| 8 | ແຂວງຫົວພັນ | - | 10,050 | 9,440 |
| 9 | ແຂວງຊຽງຂວາງ | - | 9,840 | 9,230 |
| 10 | ແຂວງວຽງຈັນ | 10,770 | 9,650 | 9,040 |
| 11 | ແຂວງບໍລິຄຳໄຊ | 10,850 | 9,730 | 9,120 |
| 12 | ແຂວງຄຳມ່ວນ | 10,800 | 9,680 | 9,070 |
| 13 | ແຂວງສະຫວັນນະເຂດ | 10,800 | 9,680 | 9,070 |
| 14 | ແຂວງສາລະວັນ | - | 9,860 | 9,250 |
| 15 | ແຂວງຈຳປາສັກ | 10,830 | 9,710 | 9,100 |
| 16 | ແຂວງເຊກອງ | - | 9,890 | 9,280 |
| 17 | ແຂວງອັດຕະປື | 11,010 | 9,890 | 9,280 |
| 18 | ແຂວງໄຊສົມບູນ | - | 9,890 | 9,280 |

Scanned with CamScanner

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 21 ມັງກອນ 2020; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.

- ການປັບລາຄາຄັ້ງນີ້ ແມ່ນໄດ້ຫຼຸດການເກັບເງິນຄັງແຮສະເພາະນ້ຳມັນກາຊວນ ລົງ 100 ກີບ/ລິດ (ຈາກ 500 ກີບ/ລິດ ຫຼຸດລົງເປັນ 400 ກີບ/ລິດ) ແລະ ປັບຂຶ້ນລາຄານ້ຳມັນເຊື້ອໄຟທຸກຊະນິດ ຄື: ແອັດຊັງພິເສດ ປັບຂຶ້ນ 90 ກີບ/ລິດ (ຈາກ 10.680 ກີບ/ລິດ ເປັນ 10.770 ກີບ/ລິດ), ແອັດຊັງທຳມະດາ ປັບຂຶ້ນ 180 ກີບ/ລິດ (ຈາກ 9.470 ກີບ/ລິດ ເປັນ 9.650 ກີບ/ລິດ) ແລະ ກາຊວນ ປັບຂຶ້ນ 380 ກີບ/ລິດ (ຈາກ 8.660 ກີບ/ລິດ ເປັນ 9.040 ກີບ/ລິດ).

- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0055 /ກຄພນ.ຄສລ, ລົງວັນທີ 20 ມັງກອນ 2020 ຈົນກວ່າຈະມີການປ່ຽນແປງ.

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1810/ອຄ.ກຄພນ, ລົງວັນທີ 13 ທັນວາ 2019.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ).

Scanned with CamScanner